*Journal of Science and Teacher Education (JLSTE), 1*(1), 61-71

# ສະພາບການບໍລິຫານວຽກງານວິຊາການສູ່ຄຸນນະພາບຜູ້ຮຽນຂອງມະຫາວິທະຍາໄລສຸພານຸວົງ

*ບູນທຽມ ພາລີໄບ*, ບຸນແສງ ບຸນທອງ ແລະ ສິມໃຈ ເມກສະຫວັນ*

*ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

---

***ບົດຄັດຫຍໍ້***

ການສຶກສາຄົ້ນຄວ້ານີ້ມີຈຸດປະສົງ 1) ເພື່ອສຶກສາສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນລະດັບປະລິນຍາຕີຢູ່ມະຫາວິທະຍາໄລສຸພານຸວົງ 2) ເພື່ອປຽບທຽບສະພາບການຈັດຕັ້ງປະຕິບັດການຮຽນການສອນ ໂດຍຈຳແນກຕາມ ເພດ ແລະ ຄະນະວິຊາ. ນຳໃຊ້ລະບຽບວິທີວິໄຈແບບສຳຫຼວດໂດຍການເກັບກຳຂໍ້ມູນດ້ານປະລິມານເປັນຫຼັກ. ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ຈຳນວນ 99 ຄົນ ໃນນີ້ເປັນຜູ້ບໍລິຫານຈຳນວນ 29 ຄົນ ເຊິ່ງເປັນການສຶກສາຈາກກຸ່ມເປົ້າໝາຍເນື່ອງຈາກມີຈຳນວນໜ້ອຍ ແລະ ອາຈານສອນ ຈຳນວນ 70 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນເປັນແບບສອບຖາມຊະນິດມາດຕາສ່ວນປະເມີນຄ່າ 5 ລະດັບສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ເປີເຊັນ, ຄ່າສະເລ່ຍ, ແລະ ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບດ້ວຍຄ່າທີ (Independent sample T-test). ຜົນການຄົ້ນຄວ້າພົບວ່າສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນລະດັບປະລິນຍາຕີຢູ່ມະຫາວິທະຍາໄລສຸພານຸວົງ ຢູ່ໃນລະດັບດີ ບໍ່ວ່າຈະເປັນດ້ານການດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້ ($\bar{x}$ = 4.13, S.D= 0.58), ດ້ານການຈັດການຮຽນ ການສອນ ($\bar{x}$ = 4.02, S.D= 0.63), ດ້ານສື່ການຮຽນ-ການສອນ ($\bar{x}$ = 3.97, S.D= 0.70), ດ້ານການວັດ ແລະ ປະເມີນຜົນ ($\bar{x}$ = 3.89, S.D= 0.75), ດ້ານການນິເທດສຶກສາ ($\bar{x}$ = 3.84, S.D= 0.69), ແລະ ດ້ານຫໍສະໝຸດ ($\bar{x}$ = 3.74, S.D= 0.78). ໃນນັ້ນ, ສະພາບການຈັດຕັ້ງປະຕິບັດການຮຽນການສອນ ໂດຍຈຳແນກຕາມເພດ ແລະ ຄະນະວິຊາ ແມ່ນແຕກຕ່າງກັນດ້ວຍລະດັບຄວາມສຳຄັນ 0.05.

***ຄຳສັບສຳຄັນ:*** *ການບໍລິຫານວຽກງານວິຊາການ, ຄຸນນະພາບຜູ້ຮຽນ, ດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້*

---

**ຕິດຕໍ່ພົວພັນ: ບູນທຽມ ພາລີໄບ, ເບີໂທ: +856 2055896419, ອີເມວ: bounthiemplb@gmail.com*

# The Academic Affairs Administration for Learner's Quality of Souphanouvong University

*Bounthiem PHALIBAY*, Bounseang BOUNTHONG and Somchai MEKSAVANH*

*Faculty of Education Souphanouvong University, Lao PDR*

## Abstract

The purposes of this study are: (1) to examine the management and implementation of graduate-level educational programs at Souphanouvong University and (2) to compare the implementation of these programs based on gender and faculty. This study employed a descriptive survey method, with quantitative data collection as the primary approach. The sample group consisted of 99 participants, including 29 administrators (the target group) and 70 teachers. Data were collected using a five-level Likert scale questionnaire for evaluation. The statistical tools used for data analysis included frequency, mean, standard deviation, and an independent samples t-test. The research findings indicate that the management and implementation of graduate-level educational programs at Souphanouvong University were at a good level across all components, including curriculum development and implementation (M = 4.13, SD = 0.58), teaching management (M = 4.02, SD = 0.63), educational communication (M = 3.97, SD = 0.70), evaluation and assessment of outcomes (M = 3.89, SD = 0.75), research education (M = 3.84, SD = 0.69), and library services (M = 3.74, SD = 0.78). Additionally, the study found significant differences in the management and implementation of educational programs based on gender and faculty, with a significance level of 0.05.

***Keywords:*** *Academic affairs administration, learning quality, curriculum development and implementation*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການສຶກສາເປັນວຽກງານທີ່ຈຳເປັນໃນການພັດທະນາຊັບພະຍາກອນມະນຸດ ເປັນພື້ນຖານຂອງການພັດທະນາຄວາມຈະເລີນກ້າວໜ້າທາງດ້ານເສດຖະກິດ-ສັງຄົມ ແລະ ການແກ້ໄຂບັນຫາອຸປະສັກຕ່າງໆຕະຫຼອດຈົນການພັດທະນາຄຸນນະພາບຊີວິດຂອງຄົນໃນສັງຄົມ. ດັ່ງນັ້ນ ການບໍລິຫານ-ຄຸ້ມຄອງການສຶກສາຈຶ່ງເປັນຂະບວນການທີ່ສຳຄັນທີ່ສຸດໃນການພັດທະນາຄົນໃຫ້ມີຄຸນນະພາບ, ມີຄວາມສາມາດປັບຕົວໄດ້ຢ່າງເໝາະສົມກັບສະພາບການປ່ຽນແປງໃໝ່ຂອງສັງຄົມ ແລະ ຍັງສາມາດດຳລົງຊີວິດຢູ່ໃນສັງຄົມຢ່າງມີຄວາມສຸກ. ເພາະການສຶກສາເປັນຈຸດສຳຄັນໃນການພັດທະນາຊັບພະຍາກອນມະນຸດ ກໍ່ຄືການພັດທະນາປະເທດຊາດ. ໃນຂະບວນການພັດທະນາປະເທດຊາດໃຫ້ມີຄວາມຈະເລີນກ້າວໜ້ານັ້ນ ມະຫາວິທະຍາໄລມີໜ້າທີ່ຫຼັກໃນການບໍລິຫານຄຸ້ມຄອງການສຶກສາເພື່ອພັດທະນາບຸກຄະລາກອນທາງດ້ານຮ່າງກາຍ, ຈິດໃຈ, ອາລົມ ແລະ ສັງຄົມຈົນເຖິງການສ້າງສະຕິປັນຍາ ແລະ ພັດທະນາຄຸນສົມບັດສິນທຳປະຕິວັດຂອງຄົນໃນສັງຄົມ.ສະນັ້ນ, ວຽກງານການຄຸ້ມຄອງ-ບໍລິຫານວຽກງານວິຊາການຈຶ່ງເປັນພາລະກິດ ແລະ ສຳຄັນໃນການພັດທະນາມະຫາວິທະຍາໄລສຸພານຸວົງກໍ່ຄືການພັດທະນາປະເທດຊາດໃຫ້ມີຄວາມຈະເລີນກ້າວໜ້າ (Phucharoen, 2021; ກົມຈັດຕັ້ງ ແລະ ພະນັກງານ, 2020). ໃນຂະນະດຽວກັນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຂອງ ສປປ. ລາວ ແມ່ນແນ່ໃສ່ພັດທະນາລະບົບການສຶກສາ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ; ໃນນັ້ນ ເປົ້າໝາຍລວມ ສຳລັບ ປີ 2021-2025 ຕໍ່ກັບວຽກງານການສຶກສາຊັ້ນສູງໃຫ້ມີການຂະຫຍາຍຕົວ ແລະ ມີຄຸນນະພາບ ສາມາດປະກອບສ່ວນ ແລະ ສະໜັບສະໜູນບັນດາບູລິມະສິດດ້ານເສດຖະກິດ ແລະ ສັງຄົມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX. ສົ່ງເສີມ ແລະ ພັດທະນາແຜນງານທີ່ກ່ຽວຂ້ອງກັບເທັກໂນໂລຊີ, ລວມທັງແຜນງານປັນຍາປະດິດ Artificial Intelligence (AI) ສຳລັບນັກສຶກ

ສາທີ່ຮຽນຢູ່ລະດັບມະຫາວິທະຍາໄລ, ໂດຍສະເພາະແມ່ນຜູ້ທີ່ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ ເພື່ອໃຫ້ມີຈຳນວນນັກສຶກສາໃນສາຍດັ່ງກ່າວເພີ່ມຂຶ້ນ; ສ້າງຄວາມເຂັ້ມແຂງໃຫ້ສູນແຫ່ງຄວາມເປັນເລີດໃນມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ; ດຳເນີນການສຶກສາຕິດຕາມນັກສຶກສາທີ່ຮຽນຈົບເປັນປົກກະຕິ ເພື່ອສ້າງຄວາມສາມາດໃຫ້ແກ່ຜູ້ຮຽນຈົບໄດ້ເຂົ້າເຖິງຕະຫຼາດແຮງງານຫຼາຍຂຶ້ນ;ສ້າງຄວາມເຂັ້ມແຂງໃຫ້ຄູ-ອາຈານ, ໂດຍສະເພາະຄູ-ອາຈານສອນໃນສາຍວິທະຍາສາດທຳມະຊາດ ເພື່ອສະໜອງ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຢີ ແລະ ນະວັດຕະກຳໃໝ່ ເພື່ອຮັບໃຊ້ປະເທດຊາດ (ກະຊວງສຶກສາທິການແລະ ກິລາ, 2020).

ໂດຍຕອບສະໜອງຕາມແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຂອງ ສປປ. ລາວ ນັ້ນ ມະຫາວິທະຍາໄລສຸພານຸວົງໄດ້ກຳນົດແຜນແຜນຍຸດທະສາດການພັດທະນາມະຫາວິທະຍາໄລສຸພານຸວົງທີ່ເປັນແຜນແມ່ບົດເພື່ອກຳນົດທິດທາງ ແລະ ຄາດໝາຍສູ້ຊົນຂອງການພັດທະນາຊັບພະຍາກອນມະນຸດພາຍໃນ 8 ແຂວງພາກເໜືອ ຫຼັກສູດການຮຽນ-ການສອນໄດ້ຮັບການພັດທະນາ ແລະ ປັບປຸງຈາກຫຼັກສູດ 2+3 ເປັນ 1+4 ໃນປີ 2010 ແລະ 0+4 ໃນ 2015. ການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການໄດ້ຮັບການຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ, ມີໂຄງການ ແລະ ອົງການສາກົນໃຫ້ການສະໜັບສະໜູນທຶນຄົ້ນຄວ້າວິໄຈ ແຕ່ເຖິງຢ່າງໃດກໍ່ຕາມສະຕິຕື່ນຕົວຄວາມຈູບຈ້າວຫ້າວຫັນ ໃນການປະຕິບັດໜ້າທີ່ວຽກງານພະນັກງານ - ອາຈານຍັງບໍ່ທັນເຂັ້ມງວດ, ສະແດງອອກຜົນການປະເມີນ ຄຸນນະພາບການສຶກສາພາຍໃນທີ່ນຳໃຊ້ມາດຕະຖານຄຸນນະພາບການສຶກສາຊັ້ນສູງຕາມ 10 ມາດຖານ 50 ຕົວຊີ້ວັດເຫັນວ່າຍັງມີຫຼາຍອັນຍັງປະຕິບັດບໍ່ໄດ້ ລະບົບການປະເມີນການຮຽນ -ການສອນພາຍໃນຄະນະວິຊາຍັງບໍ່ທັນມີຄວາມເປັນເອກະພາບທາງດ້ານວິທີການແລະ ການຈັດຕັ້ງປະຕິບັດ , ການຮຽນການສອນຍັງບໍ່ທັນໄປຕາມລະບົບໜ່ວຍກິດທີ່ແທ້ຈິງຕາມລະບົບພາກພື້ນ ແລະ ສາກົນ ເຊິ່ງໃນນັ້ນໝາກຫົວໃຈຫຼັກຂອງການປັບປຸງຄຸນນະພາບຂອງການສຶກສາກໍຄືການປັບປຸງວຽກງານບໍລິຫານງານວິຊາການ(ມະຫາວິທະຍາໄລ ສຸພານຸວົງ, 2016) ເຊິ່ງການຄຸ້ມຄອງຄຸນນະພາບການຮຽນ - ການສອນ ຕາມມາດຕະຖານຫຼັກສູດແຫ່ງຊາດ ທີ່ກະຊວງສຶກສາທິການວາງອອກ ແລະ ຮັບປະກັນດ້ານຕ່າງໆດັ່ງນີ້: (1) ສ້າງ ແລະ ປັບປຸງນິຕິກຳຕ່າງໆ ໃນການຄຸ້ມຄອງຄຸນນະພາບການຮຽນ - ການສອນໃຫ້ເປັນໄປຕາມລະບົບ ແລະ ມາດຕະຖານແຫ່ງຊາດ ທີ່ກະຊວງສຶກສາທິການວາງອອກ, (2) ສ້າງສິ່ງອຳນວຍຄວາມສະດວກຮັບໃຊ້ການຮຽນ - ການສອນ, ການຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຢີໃຫ້ນັບມື້ນັບດີຂຶ້ນເປັນຕົ້ນແມ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ສູນຂໍ້ມູນຂ່າວສານ (IT). ອຸປະກອນຮັບໃຊ້ການຮຽນ-ການສອນ, ປຶ້ມຕຳລາຮຽນ ແລະ ອື່ນໆ (3) ຕິດຕາມ, ກວດກາ ແລະ ປະເມີນຜົນ ຄຸນນະພາບລະບົບການຮຽນ - ການສອນຂອງຄູອາຈານ ແລະ ນັກສຶກສາ, (4) ຕິດຕາມນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລສຸພານຸວົງ, ຈັດຕັ້ງການປະເມີນຫຼັກສູດ ແລະ ວາງແຜນປັບປຸງຫຼັກສູດ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດແຮງງານແຕ່ລະໄລຍະ ແລະ (5) ສ້າງກິດຈະກຳຕ່າງໆ ເພື່ອສົ່ງເສີມໃຫ້ນັກສຶກສາມີຄວາມຮູ້, ມີຄວາມສາມາດປະດິດສ້າງ ແລະ ມີຄວາມກະຕືລືລົ້ນຕໍ່ການພັດທະນາປະເທດຊາດ ກໍ່ຄືການພັດທະນາຕົນເອງ ແລະ ສາມາດນຳໃຊ້ຄວາມຮູ້ດ້ານທິດສະດີ ເຂົ້າໃນພຶດຕິກຳຕົວຈິງຂອງສັງຄົມ ໂດຍສຸມໃສ່ວຽກງານດ້ານຕ່າງ ໆ ເປັນຕົ້ນແມ່ນ ການນຳໃຊ້ເທັກໂນໂລຢີສະໄໝໃໝ່ ເຊັ່ນ ລະບົບການຮຽນຮູ້ທາງອິນເຕີເນັດ, ເຄື່ອງມື digital ແລະ ເທັກໂນໂລຍີທີ່ອັດສະລິຍະຖືກນຳໃຊ້ໃນການສຶກສາເພື່ອຊ່ວຍເພີ່ມປະສິດທິພາບ ແລະ ສ້າງປະສົບການຮຽນ ຮູ້ ທີ່ດີກວ່າ. ເນັ້ນເຖິງທັກສະທີ່ຈຳເປັນສຳລັບສະຕະວັດທີ 21 ເຊັ່ນ: ທັກສະການຄິດວິຈານ, ທັກສະການສື່ສານ, ທັກສະການເຮັດວຽກເປັນທີມ ແລະ ການຜ່ອນສັ້ນຜ່ອນຍາວ. ການອອກແບບຫຼັກສູດ ແລະ ວິທີການສອນທີ່ສາມາດປັບປ່ຽນໃຫ້ເຂົ້າກັບຄວາມຕ້ອງການ ແລະ ຄວາມສົນໃຈຂອງບຸກຄົນ. ເພີ່ມການມີສ່ວນຮ່ວມ ແລະ ປະສິດທິພາບ ໃນການຮຽນຮູ້. ຍົກລະດັບຄວາມຮັບຮູ້ເຖິງຄວາມສຳຄັນຂອງການຮຽນຮູ້ຕະຫລອດຊີວິດ ແລະ ການ ພັດທະນາຕົນເອງຢ່າງຕໍ່ເນື່ອງ. ບໍ່ວ່າຈະຢູ່ໃນຂະແໜງການອາຊີບຫຼືໃນຂະແໜງການທີ່ສົນໃຈສ່ວນຕົວໃຫ້ມີການເຂົ້າເຖິງ ແຫລ່ງຊ່ວຍເຫລືອທາງການສຶກສາທີ່ເທົ່າທຽມກັນສຳລັບທຸກ ຄົນ. ບໍ່ວ່າຈະເປັນເດັກນ້ອຍໃນທຸກໄວ, ຜູ້ຍິງ, ຊົນ ເຜົ່າ ແລະ ຜູ້ທີ່ມີຄວາມຕ້ອງການພິເສດ. ພັດທະນາຜູ້ສອນໃຫ້ມີຄວາມຊຳນານ ແລະ ຄວາມຮູ້ທີ່ທັນສະໄໝ ເພື່ອໃຫ້ການສຶກສາທີ່ມີຄຸນນະພາບດີ. ສະໜັບສະໜູນການຄົ້ນຄວ້າ ແລະ ພັດທະນາການພັດທະນາການພັດທະນາໃຫມ່ໆໃນຂະແໜງການສຶກສາ ເພື່ອຊອກຫາວິທີການ ແລະ ເຄື່ອງມືໃຫມ່ໆ ເພື່ອສົ່ງເສີມປະສິດທິພາບໃນການຮຽນຮູ້ (ມະຫາວິທະຍາໄລສຸພານຸວົງ, 2016; Partnership for 21st Century skills, 2020)

ຫາກແຕ່ໃນການຈັດຕັ້ງການຮຽນ-ການສອນໃນຫຼັກສູດປະລິນຍາຕີຂອງມະຫາວິທະຍາໄລສຸພານຸວົງ ແມ່ນໄດ້ປະຕິບັດຕາມປະຕິທິນການສຶກສາຂອງ ມສ ປະຈຳສົກສຶກສາ 2023-2024. ໃນນັ້ນການປະຕິບັດຫຼັກສູດການສິດສອນ ແມ່ນໄດ້ອີງໃສ່ບັນດາຫຼັກສູດທີ່ໄດ້ຮັບອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ ສະພາບການຈັດຕັ້ງປະຕິບັດການຈັດການຮຽນ-ການສອນປະຈຳສົກສຶກສາ 2023-2024. ການສິດສອນບາງລາຍວິຊາຍັງບໍ່ທັນມີປະສິດທິພາບດີເທົ່າທີ່ຄວນເນື່ອງຈາກຂາດສິ່ງ

ຊ່ວຍສິ່ງເສີມໃນການສອນເຊັ່ນ: ເອກະສານປະກອບການສອນ ການຄົ້ນຄ້ວາ ເຝິກຫັດ, ອຸປະກອນສື່ການຮຽນ-ການສອນຍັງບໍ່ພຽງພໍ ແລະ ບໍ່ແທດເໝາະກັບສະພາບຄວາມເປັນຈິງ ເວລາສິດສອນຫຼາຍວິຊາຕ້ອງໄດ້ໃຊ້ສື່ການສອນ ແຕ່ຈຳນວນອຸປະກອນບໍ່ພໍ, ຫ້ອງຮຽນໃນການຈັດການຮຽນ-ການສອນຕາມຫຼັກສູດບໍ່ພຽງພໍ ນັກສຶກສາມາລົງທະບຽນແລ້ວແຕ່ບໍ່ມາຮຽນ (ປະລະການຮຽນ) ວິທີການສິດສອນຍັງມີລັກສະນະແບບເກົ່າບໍ່ທັນມີການນຳເອົາວິທີການ ແລະ ຂໍ້ມູນອັນໃໝ່ໆເຂົ້າໃຊ້ໃນການຮຽນ-ການສອນເທົ່າທີ່ຄວນ, ເຮັດໃຫ້ການສິດສອນພົບບັນຫາສະແດງອອກການປະເມີນການສິດສອນຂອງບາງອາຈານບໍ່ທັນບັນລຸຕາມເປົ້າໝາຍທີ່ຕັ້ງໄວ້ ແລະ ເນື້ອໃນບາງລາຍວິຊາທີ່ບັນຈຸໃນບາງຫຼັກສູດຍັງບໍ່ທັນແທດເໝາະກັບສະພາບການໃນປັດຈຸບັນ, ສິ່ງຜົນຕໍ່ຜົນການຮຽນຂອງນັກສຶກສາບໍ່ຜ່ານເກນໃນຫຼາຍສົກສຶກສາຜ່ານມາ ເຊິ່ງຈຳເປັນຕ້ອງລົງທະບຽນຮຽນເພີ່ມໃນພາກຮຽນທີ 3 ເພື່ອແກ້ຄະແນນຄືນຕື່ມໃນແຕ່ລະສົກສຶກສາທີ່ຜ່ານມາ (ຫ້ອງການວິຊາການ, 2024) ນັ້ນໝາຍຄວາມວ່າຄຸນນະພາບການຄຸ້ມຄອງ-ບໍລິຫານວຽກງານວິຊາການໃນການຈັດການຮຽນ-ການສອນຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ນອກຈາກນີ້,

ຈາກຄວາມສຳຄັນທີ່ກ່າວມາ ຜູ້ຄົ້ນຄວ້າມີຄວາມສົນໃຈທີ່ຈະສຶກສາສິ່ງທ້າທາຍໃນການຄຸ້ມຄອງ-ບໍລິຫານວຽກງານວິຊາການໃນການຈັດການຮຽນ-ການສອນ ລະດັບປະລິນຍາຕີ ທີ່ມະຫາ ວິທະຍາໄລສຸພານຸວົງ ເພື່ອເປັນແນວທາງໃນການພັດທະນາປັບປຸງການຈັດການຮຽນ-ການສອນລະດັບປະລິນຍາຕີຂອງມະຫາວິທະຍາໄລສຸພານຸວົງໃຫ້ມີຄຸນນະພາບ ແລະ ປະສິດທິພາບຫຼາຍຂຶ້ນເຊິ່ງຈະເປັນຂໍ້ມູນທີ່ດີສຳລັບອາຈານສອນ ແລະ ນັກສຶກສາ ເພື່ອຈະໄດ້ນຳຜົນການຄົ້ນຄວ້າໄປປັບປຸງ ແລະ ພັດທະນາຄຸນນະພາບການສຶກສາຂອງມະຫາວິທະຍາໄລສຸພານຸວົງໃຫ້ມີປະສິດທິພາບຫຼາຍຂຶ້ນ.

### *1.2. ຄຳຖາມຂອງການຄົ້ນຄ້ວາ*

1) ສະພາບການຈັດການຮຽນ-ການສອນລະດັບປະລິນຍາຕີຢູ່ມະຫາວິທະຍາໄລສຸພານຸວົງ ມີສະພາບຄືແນວໃດ?

2) ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ລະດັບປະລິນຍາຕີມະຫາວິທະຍາໄລສຸພານຸວົງ ໂດຍຈຳແນກຕາມເພດ ແລະ ຄະນະວິຊາ ເປັນແນວໃດ?

### *1.3. ຈຸດປະສົງຂອງການຄົ້ນຄ້ວາ*

1) ເພື່ອສຶກສາສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນລະດັບປະລິນຍາຕີຢູ່ມະຫາວິທະຍາໄລສຸພານຸວົງ.

2) ເພື່ອປຽບທຽບສະພາບການຈັດຕັ້ງປະຕິບັດການຮຽນການສອນ ໂດຍຈຳແນກຕາມ ເພດ ແລະ ຄະນະວິຊາ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ຜູ້ຄົ້ນຄວ້າໄດ້ສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງ ເພື່ອນຳມາເປັນແນວທາງໃນການສຶກສາ ດັ່ງລາຍລະອຽດດັ່ງນີ້:

ພິທັກ ເອັນດູ (2020) ໄດ້ສຶກສາກ່ຽວກັບການພັດທະນາຮູບແບບການບໍລິຫານງານວິຊາການສູ່ຄຸນນະພາບຜູ້ຮຽນໂຮງຮຽນເທບສິຣິນຣົມເກົ້າ. ມີຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ແມ່ນ 1) ສຶກສາສະພາບປັດຈຸບັນ ແລະ ບັນຫາຂອງການບໍລິຫານວຽກງານວິຊາການຂອງໂຮງຮຽນ, 2) ສ້າງ ແລະ ນຳໃຊ້ແບບຢ່າງການບໍລິຫານຽກງານວິຊາການຕໍ່ຄຸນນະພາບຂອງຜູ້ຮຽນ, 3)ປະເມີນການນຳໃຊ້ແບບຢ່າງການບໍລິຫານຽກງານວິຊາການຕໍ່ຄຸນນະພາບຂອງຜູ້ຮຽນໃນໂຮງຮຽນ ແລະ 4) ເພື່ອປະເມີນຄວາມພໍໃຈຂອງຜູ້ທີ່ກ່ຽວຂ້ອງກັບຮູບແບບການບໍລິຫານຽກງານວິຊາການສາຕໍ່ຄຸນນະພາບຂອງຜູ້ຮຽນ. ໂດຍແບ່ງອອກຂັ້ນຕອນການຄົ້ນຄວ້າເປັນ 3 ຂັ້ນຕອນຄື: ຂັ້ນຕອນທີ 1: ສຶກສາສະພາບປັດຈຸບັນ ແລະ ບັນຫາການບໍລິຫານວຽກງານວິຊາການ. ຂັ້ນຕອນທີ 2: ສ້າງ ແລະ ນຳໃຊ້ຮູບແບບການການບໍລິຫານຽກງານວິຊາການເພື່ອຄຸນນະພາບຂອງຜູ້ຮຽນໂດຍໃຊ້ຜົນຂອງການສຶກສາຂັ້ນຕອນທຳອິດເພື່ອກຳນົດໂຄງສ້າງແນວຄິດສຳລັບການສຳພາດ. ຂັ້ນຕອນທີ 3: ການປະເມີນການນຳໃຊ້ແບບແຜນການການບໍລິຫານວຽກງານວິຊາການຕໍ່ຄຸນນະພາບຂອງຜູ້ຮຽນໂດຍການວິເຄາະຜົນຂອງການປະເມີນຄຸນນະພາບພາຍໃນສະຖາບັນການສຶກສາຕາມມາດຕະຖານການສຶກສາຂັ້ນພື້ນຖານ. ກຸ່ມຕົວຢ່າງ ແມ່ນຄູສອນ, ນັກຮຽນ ແລະ ພໍ່ແມ່ຜູ້ປົກຄອງ ໃນສົກສຶກສາ 2020, ຈຳນວນ 801 ຄົນ. ເຄື່ອງມືທີ່ໃຊ້ແມ່ນແບບສອບຖາມ, ແບບສຳພາດ. ຜົນຂອງການຄົ້ນຄວ້າສະແດງໃຫ້ເຫັນວ່າ: (1) ຜົນການສຶກສາກ່ຽວກັບສະພາບປັດຈຸບັນ ແລະ ບັນຫາການການບໍລິຫານຽກງານວິຊາການໂຮງຮຽນ ເທບສິລິນຣົມເກົ້າ ມີຈຸດອ່ອນທີ່ຄວນປັບປຸງຄື ຜົນການສອບເສັງຂັ້ນພື້ນຖານຂອງການສຶກສາແຫ່ງຊາດ (O-NET) ໃນບາງວິຊາຍັງຕໍ່າກວ່າເປົ້າໝາຍຄຸນນະພາບ. ຄູສອນບາງຄົນຍັງຂາດຄວາມຊຳນານທາງເທັກໂນໂລຊີ ແລະ ຂາດ ການນຳໃຊ້ ຂັ້ນຕອນການຄົ້ນຄວ້າໃນການພັດທະນາການຮຽນ-ການສອນ ແລະ ການຮຽນຮູ້ຂາດການພັດທະນາສື່ ແລະ ອຸປະກອນໃໝ່ໆເພື່ອສອນ (2) ຮູບແບບແຜນການບໍລິຫານຽກງານວິຊາການສຳລັບຄຸນນະພາບຂອງຜູ້ຮຽນປະກອບດ້ວຍ 6 ສ່ວນປະກອບຄື: 1) ຜູ້ນຳການບໍລິຫານ ການສຶກສາ, 2) ຂະບວນການຈັດການຮຽນ-ການສອນ, 3) ການເຮັດວຽກເປັນທີມງານ, 4) ຂອບເຂດການບໍລິຫານການສຶກສາ, 5) ລະບົບຄອມພິວເຕີສຳລັບການຈັດການຮຽນ-ການສອນ ແລະ 6) ນະໂຍບາຍການສຶກສາ. ຂອງໂຮງຮຽນມີເນື້ອໃນ ແລະ ຄວາມເໝາະສົມ ໃນລະດັບ ຫຼາຍ. (3) ຜົນການປະເມີນຜົນຂອງການນຳໃຊ້ຮູບແບບການບໍລິຫານຽກງານວິຊາການຕໍ່ຄຸນນະພາບຂອງຜູ້ຮຽນ ພົບວ່າຜົນການປະເມີນຄຸນນະພາບພາຍໃນສະຖາບັນການສຶກສາຕາມມາດຕະຖານການສຶກສາຂັ້ນ

ພື້ນຖານ ສຳລັບສຶກສຶກສາ 2020 ມາດຕະຖານທີ 1 ຄຸນນະພາບຂອງຜູ້ຮຽນຢູ່ໃນລະດັບທີ່ດີເລີດ. ຜົນສຳເລັດການສຶກສາຂອງນັກຮຽນ ແລະ ການປະເມີນຄຸນນະພາບຂອງນັກຮຽນ ຜົນການສອບເສັງການສຶກສາຂັ້ນພື້ນຖານແຫ່ງຊາດ (O-NET) ຂອງນັກຮຽນຊັ້ນມັດທະຍົມປີ 3 ແລະ ມັດທະຍົມປີ 6 ສູງກວ່າເກນຂອງຄະນະກຳມະການການສຶກສາຂັ້ນພື້ນຖານ ແລະ ທົ່ວປະເທດໃນທຸກວິຊາ ແລະ (4) ຜົນຂອງການປະເມີນຄວາມພໍໃຈພົບວ່າຄູ, ນັກຮຽນ ແລະ ພໍ່ແມ່ມີຄວາມພໍໃຈຫຼາຍທີ່ສຸດ.

ພັດສະລິນ ກ່ອມສຸລີວົງ ແລະ ຈິລະສັກ ສຸລັງຄະພິພັດ (2022) ໄດ້ສຶກສາເລື່ອງການບໍລິຫານວິຊາການຂອງຜູ້ອຳນວຍການໂຮງຮຽນຂະຫຍາຍໂອກາດໃນເມືອງລຳລູກກາ ສັງກັດເຂດພື້ນທີ່ການສຶກສາປະທຸມທານີ ເຂດ 2. ຜົນຂອງການສຶກສາພົບວ່າ 1) ການບໍລິຫານວິຊາການຂອງຜູ້ອຳນວຍການໂຮງຮຽນຂະຫຍາຍໂອກາດດ້ານການສຶກສາ ໂດຍລວມແລ້ວ ຢູ່ໃນລະດັບຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ ມີການບໍລິຫານວຽກງານວິຊາການທີ່ມີຄ່າສະເລ່ຍສູງສຸດຄື ດ້ານການສົ່ງເສີມ ແລະ ສະໜັບສະໜູນວຽກງານວິຊາການສຳລັບບຸກຄົນຄອບຄົວ ອົງກອນ ໜ່ວຍງານ ແລະ ສະຖາບັນອື່ນໆທີ່ສະໜອງການສຶກສາ ແລະດ້ານທີ່ມີຄ່າສະເລ່ຍຕ່ຳສຸດຄື ດ້ານການນິເທດສຶກສາ 2) ເມື່ອປຽບທຽບດ້ານເພດພົບວ່າແຕກຕ່າງກັນຈຳນວນ 4 ດ້ານໄດ້ແກ່ ດ້ານການພັດທະນາຂະບວນການຮຽນຮູ້ ດ້ານການພັດທະນາລະບົບການປະກັນຄຸນນະພາບພາຍໃນສະຖາບັນການສຶກສາ ດ້ານການສົ່ງເສີມຄວາມຮູ້ທາງວິຊາການໃຫ້ຊຸມຊົນໃນລະດັບຄວາມສຳຄັນທາງສະຖິຕິ 0,05 ແລະ ດ້ານການວິໄຈເພື່ອພັດທະນາຄຸນນະພາບການສຶກສາທີ່ໃນລະດັບຄວາມສຳຄັນທາງສະຖິຕິ 0,01 ສ່ວນດ້ານອື່ນໆບໍ່ແຕກຕ່າງກັນ ແລະ 3 ) ການປຽບທຽບດ້ານອາຍຸພົບວ່າ ແຕກຕ່າງກັນໃນລະດັບຄວາມສຳຄັນທີລະດັບ 0.01 ພິຈາລະນາເປັນລາຍດ້ານພົບວ່າມີ 10 ດ້ານ ໄດ້ແກ່ ການພັດທະນາຫຼັກສູດຂອງໂຮງຮຽນ ການພັດທະນາຂະບວນການຮຽນຮູ້ການວັດຜົນ ປະເມີນຜົນ ແລະທຽບໂອນຜົນການຮຽນ ການພັດທະນາສື່ນະວັດຕະກຳ ແລະ ເຕັກໂນໂລຊີ ການພັດທະນາແຫຼ່ງການຮຽນຮູ້ການນິເທດການສຶກສາ ການແນະແນວການສຶກສາ ພັດທະນາລະບົບການປະກັນຄຸນນະພາບພາຍໃນໂຮງຮຽນ ການປະສານຮ່ວມມືໃນການພັດທະນາທາງວິຊາການກັບໂຮງຮຽນອື່ນ ແລະ ຊຸກຍູ້ ແລະ ການສົ່ງເສີມແລະ ສະໜັບສະໜູນ ວຽກງານທາງວິຊາການໃຫ້ແກ່ບຸກຄົນ ຄອບຄົວ ອົງກອນ ໜ່ວຍງານ ແລະ ສະຖານບັນອື່ນທີ່ສະໜອງ ການສຶກສາ ສ່ວນການວິໄຈເພື່ອພັດທະນາຄຸນນະພາບການສຶກສາ ແລະ ການສົ່ງເສີມຄວາມຮູ້ທາງວິຊາການແກ່ຊຸມຊົນພົບວ່າບໍ່ມີຄວາມແຕກຕ່າງກັນ.

ພອນ ສິດສະເກດ (2022) ໄດ້ສຶກສາເລື່ອງແນວທາງພັດທະນາການບໍລິຫານວຽກງານວິຊາການ ຂອງໂຮງຮຽນສິລະປະແຫ່ງຊາດ. ຜົນຂອງການສຶກສາພົບວ່າ 1) ສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນ ໃນ 4 ດ້ານ ໂດຍລວມຢູ່ ໃນລະດັບດີ 2) ແນວທາງພັດທະນາການບໍລິຫານວຽກງານວິຊາການຂອງໂຮງຮຽນ ດ້ານການບໍລິຫານຫຼັກສູດ ຄວນເພີ່ມທະວີການລະດົມພາກສ່ວນຕ່າງໆໃນການປະກອບສ່ວນສະໜອງສິ່ງອຳນວຍຄວາມສະດວກຮັບໃຊ້ການປະຕິບັດຫຼັກສູດໃຫ້ຄູສອນຕາມຄວາມເໝາະສົມ ສົ່ງເສີມໃຫ້ມີການແລກປ່ຽນບົດຮຽນການປະຕິບັດຫຼັກສູດກັບສະຖາບັນອື່ນໆ ດ້ານການບໍລິຫານການຈັດການຮຽນການສອນ ຄວນມີການສົ່ງເສີມ, ສ້າງເງື່ອນໄຂໃຫ້ຄູ ແລະ ນັກຮຽນໄດ້ເຂົ້າເຖິງຂໍ້ມູນຂ່າວສານ ແລະ ຊອກຫາວິທີການສອນທີ່ໃໝ່ ແລະ ເປັນປະໂຫຍດໃນການຮຽນ, ສົ່ງເສີມໃຫ້ຄູມີການຈັດກິດຈະກຳການຮຽນການສອນທີ່ຫຼາກຫຼາຍວິທີ. ດ້ານການບໍລິຫານການຮຽນ - ການສອນຄວນພັດທະນາຫ້ອງສະໝຸດໃຫ້ມີປຶ້ມຕຳລາ ປຶ້ມແບບຮຽນ ເອເລັກໂຕນິກເຊັ່ນ: e-books, e-library ເອກະສານປະກອບການຮຽນການສອນຢ່າງພຽງພໍ, ເພີ່ມທະວີການຊຸກຍູ້ໃຫ້ຄູສອນມີຄວາມເອົາ ໃຈໃສ່ໃນການນຳໃຊ້ສື່ການຮຽນການສອນ ດ້ານການບໍລິຫານການວັດ ແລະ ປະເມີນຜົນການຮຽນການສອນ ຄວນສະໜັບສະໜູນໃຫ້ຄູໄດ້ໃຊ້ຫຼາກຫຼາຍວິທີການໃນການວັດ ແລະ ປະເມີນຜົນ ມີການວັດ ແລະ ປະເມີນຜົນການຮຽນກ່ອນສອນຫຼັງສອນ ແລະ ຄະນະກຳລັງສອນຕ້ອງມີການນຳຜົນການປະເມີນນຳມາໃຊ້ໃນການປັບປຸງການຮຽນ-ການສອນ ແລະ 3) ຜົນການການປະເມີນແນວທາງພັດທະນາການບໍລິຫານວຽກງານວິຊາການຂອງໂຮງຮຽນໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາແຕ່ລະມາດຕະຖານເຫັນວ່າທຸກມາດຕະຖານ ຢູ່ໃນລະດັບຫຼາຍ ມາດຕະຖານທີ່ມີມີຄ່າສະເລ່ຍສູງສຸດ ແມ່ນ ມາດຕະຖານຄວາມເປັນໄປໄດ້ ຮອງລົງມາ ແມ່ນ ມາດຕະຖານຄວາມສອດຄ່ອງ, ມາດຕະຖານຄວາມເໝາະສົມ ສ່ວນມາດຕະຖານທີ່ມີຄ່າສະເລ່ຍຕ່ຳສຸດ ແມ່ນ ມາດຕະຖານຄວາມຖືກຕ້ອງ.

ບຸນຕາ ອິນໄຊຄຳ (2023)ໄດ້ສຶກສາເລື່ອງ ແນວທາງພັດທະນາການບໍລິຫານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນ ເມືອງໂພນໂຮງ ແຂວງວຽງຈັນ. ຜົນການສຶກສາພົບວ່າ: (1) ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຕໍ່ກັບສະພາບການບໍລິຫານວິຊາການຂອງໂຮງຮຽນມັດທະຍົມສຶກສາສົມບູນ ເມືອງໂພນໂຮງ ແຂວງວຽງຈັນໂດຍລວມຢູ່ໃນລະດັບຫຼາຍ. (2) ແນວທາງໃນການປັບປຸງການບໍລິຫານວິຊາການຂອງໂຮງຮຽນມັດທະຍົມສຶກສາສົມບູນ ເມືອງໂພນໂຮງ ແຂວງວຽງຈັນມີດັ່ງນີ້: ໂຮງຮຽນຄວນມີການແລກປ່ຽນບົດຮຽນການຈັດຕັ້ງປະຕິບັດຫຼັກສູດກັບໂຮງຮຽນອື່ນ ໆ (ໃກ້ຄຽງ),ໂຮງຮຽນຄວນຈັດກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດຫຼັກສູດໃນແຕ່ລະສົກຮຽນ, ໂຮງຮຽນຄວນມີການຈັດຕາຕະລາງສອນທົດແທນຄືນເວລາຄູສອນມີວຽກຈຳເປັນ, ຄວນໃຫ້ຄູຈັດກິດຈະກຳກ່ຽວກັບການຮຽນ - ການສອນທີ່ເໝາະສົມກັບເກນອາຍຸຂອງນັກຮຽນຕາມຈຸດປະສົງຂອງຫຼັກສູດ, ໂຮງຮຽນຄວນມີການສົ່ງເສີມໃຫ້ຄູສອນເຂົ້ານຳໃຊ້ຫ້ອງສະໝຸດເພື່ອການສຶກສາຄົ້ນຄວ້າຫາຄວາມຮູ້ເພີ່ມເຕີມເຂົ້າໃນການຈັດການຮຽນ - ການສອນ, ໂຮງຮຽນຄວນແນະນຳໃຫ້ຄູສອນມີການວັດ ແລະ ປະເມີນຜົນການຮຽນກ່ອນ

ສອນ, ໃນຂະນະທີ່ກຳລັງສອນ ແລະ ຫຼັງການສອນ, ໂຮງຮຽນຄວນມີການປະຖົມນິເທດຄວາມຮູ້, ຄວາມເຂົ້າໃຈກ່ຽວກັບການນຳໃຊ້ຫຼັກສູດໃຫ້ແກ່ຄູສອນໃໝ່ ແລະ (3) ຜົນການປະເມີນແນວທາງພັດທະນາການບໍລິຫານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນ ເມືອງໂພນໂຮງ ແຂວງວຽງຈັນໂດຍລວມມີຄວາມເໝາະສົມຢູ່ໃນລະດັບຫຼາຍ.

ພັດສະລິນ ຊູຊ່ວຍ ແລະ ອຳນວຍ ທອງໂປ່ງ (2023) ໄດ້ສຶກສາເລື່ອງ ຄວາມເພິ່ງພໍໃຈຂອງຄູທີ່ມີຕໍ່ການບໍລິຫານວຽກວິຊາການຂອງຜູ້ບໍລິຫານສະຖາບັນການສຶກສາ ໂຮງຮຽນ ສັງກັດ ກຸງເທບມະຫານະຄອນ. ຜົນການສຶກສາພົບວ່າ 1) ຄວາມພໍໃຈຂອງຄູທີ່ມີຕໍ່ກັບການບໍລິຫານວິຊາການຂອງຜູ້ບໍລິຫານ ຄະນະບໍລິຫານໂຮງຮຽນສັງກັດ ກຸງເທບມະຫານະຄອນ ສຳນັກງານເຂດບາງນາ ກຸງເທບມະຫານະຄອນ ໂດຍລວມຢູ່ໃນລະດັບຫຼາຍໃນທຸກໆດ້ານ 2) ຄູທີ່ມີລະດັບການສຶກສາ ແລະມີປະສົບການໃນການປະຕິບັດວຽກງານຕ່າງກັນມີຄວາມເພິ່ງພໍໃຈຕໍ່ການບໍລິຫານວິຊາການຂອງຜູ້ບໍລິຫານຂອງສະຖາບັນການສຶກສາ ໂຮງຮຽນສັງກັດ ກຸງເທບມະຫານະຄອນ ສຳນັກງານເຂດບາງນາ ກຸງເທບມະຫານະຄອນ ໂດຍພາບລວມ ມີຄວາມແຕກຕ່າງແລະພິຈາລະນາເປັນລາຍດ້ານພົບວ່າ ດ້ານການພັດທະນາຂະບວນການຮຽນຮູ້ ດ້ານການພັດທະນາຫຼັກສູດໃນສະຖາບັນການສຶກສາ ແລະ ດ້ານການນິເທດການສຶກສາ ມີຄວາມແຕກຕ່າງກັນ ສ່ວນດ້ານການວັດປະເມີນຜົນ ແລະດຳເນີນການທຽບໂອນຜົນການຮຽນບໍ່ມີຄວາມແຕກຕ່າງກັນ.

ຈາກການສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງ ຜູ້ຄົ້ນຄວ້າສາມາດສະຫຼຸບໄດ້ວ່າວຽກງານວິຊາການເປັນວຽກງານໜຶ່ງທີ່ຫຼາຍ ແລະ ເປັນໜາກຫົວໃຈອັນສຳຄັນຂອງສະຖານບັນໃນການພັດທະນາວຽກງານການສຶກສາຂອງສະຖາບັນໃນລະດັບຕ່າງ ໆ ເຊິ່ງສາມາດສະຫຼຸບເປັນຂອບຄວາມຄິດໃນການຄົ້ນຄວ້າຄັ້ງນີ້ໄດ້ດັ່ງນີ້




ຮູບທີ່ 1 ຂອບຄວາມຄິດໃນການສຶກສາ

## 3. ວິທີດຳເນີນການຄົ້ນຄວ້າ

ໃນການຄົ້ນຄວ້າຄັ້ງນີ້ນຳໃຊ້ລະບຽບການຄົ້ນຄວ້າແບບສຳຫຼວດ (Survey research methodology) ດ້ວຍການປະສົມປະສານຂໍ້ມູນທາງດ້ານປະລິມານ ແລະ ຄຸນນະພາບ (Creswell and Plano, 2011) ໂດຍນຳໃຊ້ແບບສອບຖາມເປັນເຄື່ອງມືໃນ

(ຜູ້ບໍລິຫານ ຈຳນວນ 29 ຄົນ ແລະ ອາຈານສອນ ຈຳນວນ 234 ຄົນ). ກຸ່ມຕົວຢ່າງໃນການຕອບແບບສອບຖາມ ຈຳນວນ 99 ຄົນ ໃນນີ້ເປັນຜູ້ບໍລິຫານຈຳນວນ 29 ຄົນ ເປັນການສຶກສາຈາກກຸ່ມເປົ້າໝາຍເນື່ອງຈາກມີຈຳນວນໜ້ອຍ ແລະ ອາຈານສອນ ຈຳນວນ 70 ຄົນ ໂດຍການກຳນົດຂະໜາດຂອງຕົວຢ່າງຕາມເກນ 30% (ບຸນຊົມ ສີສະອາດ, 2015) ແລະ ນາໃຊ້ເທັກນິກການເລືອກຕົວຢ່າງແບບງ່າຍດາຍ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ການເກັບກຳຂໍ້ມູນຈາກກຸ່ມຕົວຢ່າງ ແລະ ການສຳພາດ ແລ້ວນຳຂໍ້ມູນມາວິເຄາະ ແລະ ອະທິບາຍຜົນແບບພັນລະນາຄວາມ.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ກຸ່ມປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ເປັນຜູ້ບໍລິຫານ ແລະ ອາຈານສອນ ສັງກັດໃນມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2024-2025 ທັງໝົດຈຳນວນ 263 ຄົນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນແບບສອບຖາມຊະນິດແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ລະດັບ (Best & Kahn, 1993; Wongwanit, 2012; Phanakij & Nillapun, 2016; Tanthawanich &Jindasri, 2018 ແລະ Vathanavong et al., 2024) ຄື: (5 ໝາຍເຖິງການປະຕິບັດໃນລະດັບດີທີ່ສຸດ, 4 ໝາຍເຖິງການປະຕິບັດໃນລະດັບດີ, 3 ໝາຍເຖິງການປະຕິບັດໃນລະດັບ ປານກາງ, 2 ໝາຍເຖິງການປະຕິບັດໃນລະດັບ ໜ້ອຍ, 1 ໝາຍເຖິງການປະຕິບັດ

ໃນລະດັບ ໜ້ອຍທີ່ສຸດ). ເຊິ່ງແບບສອບຖາມປະກອບມີ 3 ພາກ ຄື: ພາກທີ 1 ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ພາກທີ 2 ແມ່ນຂໍ້ມູນກ່ຽວກັບການຄຸ້ມຄອງ-ບໍລິຫານວຽກງານວິຊາການ ໃນ 6 ດ້ານ ໄດ້ແກ່:

(1) ດ້ານຫຼັກສູດ ແລະ ການນາຫຼັກສູດໄປໃຊ້ (2) ດ້ານການຈັດການຮຽນ - ການສອນ, (3) ດ້ານສື່ການຮຽນ - ການສອນ, (4) ດ້ານການວັດ ແລະ ປະເມີນຜົນ, (5) ດ້ານຫໍສະໝຸດ ແລະ (6) ດ້ານການນິເທດສຶກສາ, ພາກທີ່ 3 ຂໍ້ສະເໜີແນະເພີ່ມເຕີມ. ແບບສອບຖາມດັ່ງກ່າວນີ້ໄດ້ຜ່ານການກວດສອບ ແລະ ປະເມີນຄຸນນະພາບຈາກຜູ້ຊ່ຽວຊານຈໍານວນ 3 ທ່ານ ເຊິ່ງໄດ້ຄ່າດັດສະນີຄວາມສອດຄ່ອງ (IOC) ຢູ່ລະຫວ່າງ 0.67-1.00 ແລະ ຄ່າຄວາມເໝາະສົມຂອງແບບສອບຖາມຢູ່ໃນລະດັບເໝາະສົມຫຼາຍທີ່ສຸດ ມີຄ່າສະເລ່ຍ 4.63 ຄ່າຜັນປ່ຽນມາດຕະຖານ 0.25 ຫຼັງຈາກນັ້ນນໍາໄປທົດລອງກັບກຸ່ມຕົວຢ່າງທີ່ມີບໍ່ແມ່ນກຸ່ມທີ່ໃຊ້ຈິງ ແຕ່ມີຄຸນລັກສະນະທີ່ຄ້າຍຄືກຸ່ມຕົວຢ່າງຈໍານວນ 30 ຄົນ ເພື່ອຫາຄ່າຄວາມເຊື່ອໝັ້ນ (reliability) ທັງສະບັບດ້ວຍຄ່າສະປະສິດອານຟາຂອງຄອນບາດ (Cronbach's alpha) ເທົ່າກັບ 0.920 ແລະ ໄດ້ມີການປັບປຸງບາງສ່ວນຕາມຄໍາແນະນໍາຂອງຜູ້ຊ່ຽວຊານ ເພື່ອໃຫ້ໄດ້ແບບສອບຖາມສະບັບສົມບູນ ແລ້ວນໍາໄປເກັບກໍາກັບກຸ່ມຕົວຢ່າງຈໍານວນ 77 ສະບັບ ໂດຍຜ່ານການອະນຸຍາດ ແລະ ເຫັນດີຈາກອະທິການບໍດີມະຫາວິທະຍາໄລສຸພານຸວົງ.

*3.3 ວິທີເກັບກໍາຂໍ້ມູນ*

ການເກັບກໍາລວບລວບຂໍ້ມູນການສຶກສາຄັ້ງນີ້ຜູ້ສຶກສາໄດ້ດໍາເນີນການເກັບລວບລວມຂໍ້ມູນຕາມລໍາດັບຂັ້ນຕອນດັ່ງນີ້:

1. ຜູ້ສຶກສາຂໍໜັງສືສະເໜີຈາກຄະນະສຶກສາສາມະຫາວິທະຍາໄລສຸພານຸວົງ ເພື່ອໄປຂໍຄວາມຊ່ວຍເຫຼືອຈາກແລະປະສານງານຫາຜູ້ບໍລິຫານຄະນະວິຊາ ແລະ ຄູອາຈານສອນ 6 ຄະນະວິຊາ ເພື່ອຂໍອະນຸຍາດຂໍເກັບກໍາຂໍ້ມູນນໍາກຸ່ມຕົວຢ່າງ

2) ປະສານງານແລະຕິດຕໍ່ພົວພັນຫາກຸ່ມເປົ້າໝາຍແລະຊີ້ແຈງລາຍລະອຽດຂອງການເກັບກໍາແລະລວບລວມຂໍ້ມູນ ແຈກຢາຍແບບສອບຖາມໃຫ້ກັບກຸ່ມເປົ້າໝາຍໂດຍຜູ້ຄົ້ນຄ້ວາໄປສົ່ງ ແລະ ເກັບແບບສອບຖາມດ້ວຍຕົນເອງຕາມເວລາທີ່ນັດໝາຍ.

3) ຜູ້ສຶກສາໄປຮັບແບບສອບຖາມດ້ວຍຕົນເອງແລ້ວນໍາເອົາແບບສອບຖາມທີ່ລວບລວມມາໄດ້ແລ້ວກວດສອບຄືນຖືກຕ້ອງສົມບູນ ເພື່ອໃຊ້ວິເຄາະຂໍ້ມູນຕໍ່ໄປ

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ການວິເຄາະຂໍ້ມູນຄັ້ງນີ້ແມ່ນນໍາໃຊ້ໂປຣແກມຄອມພິວເຕີສໍາເລັດຮູບ SPSS version 20 ເຂົ້າຊ່ວຍໃນການວິເຄາະກ່ຽວກັບຂໍ້ມູນແຕ່ລະພາກ ໂດຍໃຊ້ຄ່າສະຖິຕິພື້ນຖານ, ໄດ້ແກ່: ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation), ການທົດສອບແບບ ທີ (Independent Sample T-Test). ສາລັບຄ່າສະເລ່ຍແມ່ນນາໄປປຽບທຽບກັບເກນເພື່ອອະທິບາຍຜົນ (Suwannoi, 2012, ທອງທ່ຽນ ວັດທະນາວົງ ແລະ ຄະນະ, 2020, Wongyai, 2020) ເຊິ່ງກໍານົດເກນ ດັ່ງນີ້:

ຄະແນນສະເລ່ຍລະຫວ່າງ 4.50 – 5.00 ໝາຍເຖິງ ສະພາບການຈັດຕັ້ງປະຕິບັດ ຢູ່ໃນລະດັບດີທີ່ສຸດ

ຄະແນນສະເລ່ຍລະຫວ່າງ 3.50 – 4.49 ໝາຍເຖິງ ສະພາບການຈັດຕັ້ງປະຕິບັດ ຢູ່ໃນລະດັບດີ

ຄະແນນສະເລ່ຍລະຫວ່າງ 2.50 – 3.49 ໝາຍເຖິງ ສະພາບການຈັດຕັ້ງປະຕິບັດ ຢູ່ໃນລະດັບປານກາງ

ຄະແນນສະເລ່ຍລະຫວ່າງ 1.50 – 2.49 ໝາຍເຖິງ ສະພາບການຈັດຕັ້ງປະຕິບັດ ຢູ່ໃນລະດັບໜ້ອຍ

ຄະແນນສະເລ່ຍລະຫວ່າງ 1.00 – 1.49 ໝາຍເຖິງ ສະພາບການຈັດຕັ້ງປະຕິບັດຢູ່ໃນລະດັບໜ້ອຍທີ່ສຸດ.

## 4. ຜົນການຄົ້ນຄວ້າ

ການຜົນການຄົ້ນຄວ້າແມ່ນນໍາສະເໜີຕາມຈຸດປະສົງຂອງການຄົ້ນຄວ້າເບື້ອງຕົ້ນ ດັ່ງນີ້:

1. ຜົນສຶກສາສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ

ຕາຕະລາງທີ 1 ຜົນການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ

| ລາຍການປະເມີນ | $\bar{x}$ | S.D | ລະດັບ ການປະຕິບັດການ | ຈັດລໍາດັບ |
|---|---|---|---|---|
| 1. ດ້ານຫຼັກສູດ ແລະ ການນໍາຫຼັກສູດໄປໃຊ້ | 4.13 | 0.58 | ດີ | 1 |
| 2. ດ້ານການຈັດການຮຽນ ການສອນ | 4.02 | 0.63 | ດີ | 2 |
| 3. ດ້ານສື່ການຮຽນ-ການສອນ | 3.97 | 0.70 | ດີ | 3 |

| | | | | |
|---|---|---|---|---|
| 4. ດ້ານການວັດ ແລະ ປະເມີນຜົນ | 3.84 | 0.69 | ດີ | 5 |
| 5. ດ້ານຫໍສະໝຸດ | 3.74 | 0.78 | ດີ | 6 |
| 6. ດ້ານການນິເທດສຶກສາ | 3.89 | 0.75 | ດີ | 4 |
| ສະເລ່ຍລວມ | 3.94 | 0.58 | ດີ | |

ຈາກຕາຕະລາງທີ 1 ພົບວ່າໂດຍພາບລວມການຈັດຕັ້ງປະຕິບັດການຮຽນການສອນໃນລະດັບປະລິນຍາຕີ ທີ່ມະຫາວິທະຍາໄລສຸພານຸວົງ ໂດຍພາບລວມຢູ່ໃນລະດັບຫຼາຍ ($\bar{x}$= 3.94, S.D= 0.58). ເມື່ອພິຈາລະນາເປັນລາຍດ້ານ ພົບວ່າທັງ 6 ດ້ານລ້ວນແຕ່ຢູ່ໃນລະດັບ ຫຼາຍ ທັງໝົດ ແລະ ເມື່ອລຽງລຳດັບເຫັນວ່າດ້ານການປະຕິບັດການດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້ປະຕິບັດຫຼາຍເປັນລຳດັບທີ່ 1 ($\bar{x}$= 4.13, S.D= 0.58). ຮອງລົງມາເປັນດ້ານການຈັດການຮຽນ ການສອນ ($\bar{x}$= 4.02, S.D= 0.63) ແລະ ດ້ານສື່ການຮຽນ-ການສອນ ($\bar{x}$= 3.97, S.D= 0.70 ຕາມລາດັບ ໃນຂະນະທີ່ດ້ານສຸດທ້າຍແມ່ນດ້ານຫໍສະໝຸດ ($\bar{x}$= 3.74, S.D= 0.78).

2. ຜົນປຽບທຽບສະພາບການຈັດຕັ້ງປະຕິບັດການຮຽນການສອນ ໂດຍຈຳແນກຕາມ ເພດ ແລະ ຄະນະວິຊາ.

ຕາຕະລາງທີ 2 ຜົນການປຽບທຽບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງໂດຈຳແນກຕາມ ເພດ

| ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນ | ຊາຍ (72 ຄົນ) | | ຍິງ (27 ຄົນ) | | t-test | Sig.(2 tailed) |
|---|---|---|---|---|---|---|
| | $\bar{X}$ | S.D | $\bar{X}$ | S.D | | |
| 1. ດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້ | 4.11 | 0.61 | 4.17 | 0.53 | 0.474 | .636 |
| 2. ດ້ານການຈັດການຮຽນ ການສອນ | 3.99 | 0.65 | 4.09 | 0.54 | 0.670 | .505 |
| 3. ດ້ານສື່ການຮຽນ-ການສອນ | 3.91 | 0.75 | 4.14 | 0.54 | 1.402 | .164 |
| 4. ດ້ານການວັດ ແລະ ປະເມີນຜົນ | 3.79 | 0.71 | 3.98 | 0.62 | 1.234 | .220 |
| 5. ດ້ານຫໍສະໝຸດ | 3.68 | 0.84 | 3.91 | 0.57 | 1.316 | .191 |
| 6. ດ້ານການນິເທດສຶກສາ | 3.82 | 0.80 | 4.08 | 0.56 | 1.563 | .121 |

ຈາກຕາຕະລາງທີ 2 ພົບວ່າ ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນໂດຍຈຳແນກຕາມເພດ ທັງໂດຍພາບລວມ ແລະ ລາຍດ້ານທັງ 6 ດ້ານ ບໍ່ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສຳຄັນ 0.05 ໂດຍຄວາມຄິດເຫັນຈາກເພດຍິງ ແລະ ເພດຊາຍທີ່ເປັນທັງຜູ້ບໍລິຫານ ແລະ ອາຈານສອນແມ່ນແຕກຕ່າງກັນ ໝາຍຄວາມວ່າມີຄວາມເປັນເອກະພາບກັນໃນການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ.

ຕາຕະລາງທີ 3 ຜົນການປຽບທຽບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ ໂດຍຈຳແນກຕາມຄະນະວິຊາ

| ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນ | ຜູ້ບໍລິຫານ (29 ຄົນ) | | ອາຈານ (70 ຄົນ) | | t-test | Sig.(2 tailed) |
|---|---|---|---|---|---|---|
| | $\bar{X}$ | **S.D** | $\bar{X}$ | **S.D** | | |
| 1. ດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້ | 4.06 | 0.60 | 4.15 | 0.58 | -0.694 | .489 |
| 2. ດ້ານການຈັດການຮຽນ ການສອນ | 4.01 | 0.53 | 4.02 | 0.66 | -0.118 | .906 |
| 3. ດ້ານສື່ການຮຽນ-ການສອນ | 4.06 | 0.56 | 3.94 | 0.76 | 0.752 | .454 |
| 4. ດ້ານການວັດ ແລະ ປະເມີນຜົນ | 3.81 | 0.69 | 3.85 | 0.70 | -0.312 | .756 |
| 5. ດ້ານຫໍສະໝຸດ | 3.66 | 0.78 | 3.78 | 0.78 | -0.655 | .514 |
| 6. ດ້ານການນິເທດສຶກສາ | 3.80 | 0.74 | 3.93 | 0.75 | -0.773 | .443 |

ຈາກຕາຕະລາງທີ 3 ພົບວ່າ ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນໂດຍຈຳແນກຕາມຄະນະວິຊາ ງານທັງໂດຍພາບລວມ ແລະ ລາຍດ້ານທັງ 6 ດ້ານ ບໍ່ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສຳຄັນ 0.05 ໂດຍຄວາມຄິດເຫັນຈາກທັງຜູ້ບໍລິຫານ ແລະ ອາຈານສອນ ແມ່ນບໍ່ແຕກຕ່າງກັນ ໝາຍຄວາມວ່າມີຄວາມເປັນເອກະພາບກັນໃນການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ

## 5. ອະພິປາຍຜົນ

ຈາກຜົນການຄົ້ນຄວ້າສາມາດອະພິປາຍ ດັ່ງນີ້:

ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນ ໂດຍພາບລວມຢູ່ໃນລະດັບດີ ໝາຍຄວາມວ່າສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ ໝາຍຄວາມວ່າມີຄຸນນະພາບ ແລະ ບໍ່ມີບັນຫາ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ພິທັກ ເອັນດູ (2020) ໄດ້ສຶກສາກ່ຽວກັບການພັດທະນາຮູບແບບການບໍລິຫານງານວິຊາການສູ່ຄຸນນະພາບຜູ້ຮຽນ ໂຮງຮຽນເທບສິຣິນຣົ່ມເກົ້າ ທີ່ສຶກສາພົບວ່າ ຮູບແບບແຜນການບໍລິຫານຽກງານວິຊາການສໍາລັບຄຸນນະພາບຂອງຜູ້ຮຽນປະກອບດ້ວຍ 6 ສ່ວນປະກອບຄື: 1) ຜູ້ນໍາການບໍລິຫານການສຶກສາ, 2) ຂະບວນການຈັດການຮຽນ-ການສອນ, 3) ການເຮັດວຽກເປັນທີມງານ, 4) ຂອບເຂດການບໍລິຫານການສຶກສາ, 5) ລະບົບຄອມພິວເຕີສໍາລັບການຈັດການຮຽນ-ການສອນ ແລະ 6) ນະໂຍບາຍການສຶກສາຂອງໂຮງຮຽນມີເນື້ອໃນ ແລະ ຄວາມເໝາະສົມ ໂດຍພາບລວມຢູ່ໃນລະດັບຫຼາຍ. ສອດຄ່ອງກັບ ສີມາລາ ລີວົງຍາ ແລະ ນັນທະລັດ ຈະເລີນກຸນ (2015) ໄດ້ສຶກສາແນວທາງການພັດທະນາຄູຂອງໂຮງຮຽນມັດທະຍົມສຶກສາໃນນະຄອນຫຼວງວຽງຈັນ ສປປ.ລາວ; Boonrak & Siththada (2024)ໄດ້ສຶກສາການບໍລິຫານວິຊາການຂອງຜູ້ອໍານວຍການໂຮງຮຽນຂະຫຍາຍໂອກາດດ້ານການສຶກສາ ເມືອງຊານໄຊ ແຂວງ ອ່າງທອງ; ອະພິຊາດ ຄໍາຫານ, ຈະເລີນວິດ ສົມພົງທໍາ ແລະ ນິບພົງ ບຸນຈິດຕາດູນ (2021) ແລະ To-Im & Waichalad (2020). ໂດຍຜົນການສຶກສາຂອງທັງສາມບົດຄົ້ນຄວ້າ ພົບວ່າ ການບໍລິຫານ ແລະ ຄຸ້ມຄອງວິຊາການຂອງສອງສະຖາບັນ ໂດຍພາບລວມແລ້ວ ຢູ່ໃນລະດັບຫຼາຍ ແລະ ເມື່ອປຽບທຽບສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ ໂດຍຈໍາແນກຕາມເພດ ແລະ ຕໍາແໜ່ງງານແມ່ນບໍ່ມີຄວາມແຕກຕ່າງກັນ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ນິລະມົນ ຊາສະຫງວນ, ມົນຕີ ອະນັນຕະລັກ ແລະ ສຸເທບ ທອງປະດິດ (2015) ທີ່ສຶກສາປຽບທຽບການພັດທະນາຄຸນນະພາບການສຶກສາ ແລະ ການສົ່ງເສີມຄວາມຮູ້ທາງວິຊາການແກ່ຊຸມຊົນ ພົບວ່າ ບໍ່ມີຄວາມແຕກຕ່າງກັນ. ຜົນການຄົ້ນຄວ້າທີ່ກ່າວມາຂ້າງເທິງນັ້ນອາດໄດ້ຮັບຜົນດີເນື່ອງຈາກວ່າ ໃນວຽກງານການບໍລິຫານຄຸ້ມຄອງດ້ານການຈັດການຮຽນການສອນແມ່ນສາມາດປະຕິບັດຕາມຫຼັກການບໍລິຫານງານດ້ານວິຊາການໄດ້ດີ ທັງໃນວຽກງານດ້ານຫຼັກສູດ ແລະ ການນໍາຫຼັກສູດໄປໃຊ້ ແມ່ນເປັນໄປຕາມຂອບເຂດກໍານົດຂອງມະຫາວິທະຍາໄລວາງອອກ ໂດຍອີງໃສ່ຂອບມາດຕະຖານຫຼັກສູດແຫ່ງຊາດໃນລະດັບປະລິນຍາຕີ ໂດຍອາຈານສອນສ່ວນໃຫຍ່ແມ່ນມີຄວາມຮູ້,ຄວາມເຂົ້າໃຈກ່ຽວກັບຈຸດປະສົງຂອງຫຼັກສູດຢ່າງຊັດເຈນ, ມີການນໍາໃຊ້ຫຼັກສູດເປັນຫຼັກໃນການຈັດການຮຽນ-ການສອນຢ່າງເປັນລະບົບຄົບຊຸດ, ມີການວິເຄາະ ແລະ ປະເມີນຫຼັກສູດກ່ອນນໍາໄປໃຊ້, ມີການສຶກສາໂຄງສ້າງຈຸດໝາຍ ແລະ ຫຼັກການຂອງຫຼັກສູດກ່ອນການສອນ, ມີການພັດທະນາຫຼັກສູດໃຫ້ສອດຄ່ອງກັບຄວາມຕ້ອງການຂອງສັງຄົມໃນແຕ່ລະໄລຍະ. ດ້ານການຈັດການຮຽນ ການສອນອາຈານມີການເຮັດແຜນການສອນ ແລະ ຕາຕະລາງສອນເພື່ອກຽມວຽກງານກ່ອນເປີດການຮຽນ, ນໍາໃຊ້ເທັກນິກການສອນ ແລະມີເຄື່ອງມືການສອນທີ່ທັນສະໄໝ, ສ້າງບັນຍາກາດພາຍໃນຫ້ອງຮຽນໃຫ້ເອື້ອອໍານວຍຕໍ່ການຮຽນ-ການສອນ, ຈັດໃຫ້ມີກິດຈະກໍາການຮຽນ-ການສອນທີ່ຫຼາກຫຼາຍ, ມີການພັດທະນາການຮຽນ-ການສອນຢ່າງຕໍ່ເນື່ອງ ແລະ ເປັນລະບົບມີການກວດສອບແຜນການສອນກ່ອນນໍາໄປໃຊ້ສອນ, ມີການຈັດກິດຈະກໍາການຮຽນ-ການສອນທີ່ສອດຄ່ອງກັບເນື້ອຫາວິຊາແຕ່ລະກຸ່ມສາລະການຮຽນຮູ້. ດ້ານສື່ການຮຽນ-ການສອນ, ອາຈານມີການຈັດກຽມສື່ອຸປະກອນການຮຽນ-ການສອນກົງກັບລາຍວິຊາສອນ, ຈັດຫານະວັດຕະກໍາ ແລະ ເທັກໂນໂລຊີທີ່ຈໍາເປັນມາໃຊ້ໃນການຈັດການຮຽນ-ການສອນ, ຈັດມີການວາງແຜນພັດທະນາຜະລິດສື່ການສອນ ແລະ ນໍາໃຊ້ສື່ການຮຽນ-ການສອນທີ່ກົງກັບຈຸດປະສົງເນື້ອໃນ - ກິດຈະກໍາຂອງບົດຮຽນ ແລະ ມີການສົ່ງເສີມໃຫ້ຄູ-ອາຈານຜະລິດສື່ການສອນດ້ວຍຕົນເອງ. ດ້ານການວັດ ແລະ ປະເມີນຜົນອາຈານສອນມີສ່ວນຮ່ວມໃນການກໍາກັບເກນສໍາລັບການວັດແລະປະເມີນຜົນຂອງມະຫາວິທະຍາໄລສົ່ງເສີມໃຫ້ຄູ-ອາຈານໃຊ້ເຄື່ອງມືວັດ ແລະ ປະເມີນຜົນທີ່ຫຼາກຫຼາຍຕາມສະພາບຕົວຈິງ, ມີເຄື່ອງມືວັດ ແລະ ປະເມີນຜົນການຮຽນ-ການສອນທີ່ມີຄຸນນະພາບມະຫາວິທະຍາໄລມີການເກັບກໍາລວບລວມຂໍ້ມູນການວັດ ແລະ ປະເມີນຜົນການຮຽນ-ການສອນທຸກຄັ້ງ, ມີການວິເຄາະຜົນຂອງການວັດແຕ່ລະທັກສະມະຫາວິທະຍາໄລນໍາຜົນຂອງການວັດ ແລະ ປະເມີນຜົນມາເປັນຂໍ້ມູນໃນການວາງແຜນການຈັດການຮຽນ-ການສອນໃນປີຕໍ່ໄປ. ດ້ານຫໍສະໝຸດມີການຈັດຫາບຸກຄະລາກອນກົງກັບຄວາມຮູ້,ຄວາມສາມາດໃນການບໍລິການຫໍສະໝຸດຫໍສະໝຸດມີຄວາມພ້ອມໃຫ້ບໍລິການແກ່ຜູ້ຄົນທີ່ມາໃຊ້ຢ່າງມີລະບົບ ແລະ ມີການສົ່ງເສີມໃຫ້ອາຈານ ແລະ ນັກສຶກສາໃຫ້ມີນິໄສຮັກການອ່ານສາມາດໃຫ້ຫໍສະໝຸດເປັນແຫຼ່ງການສຶກສາຄົ້ນຄວ້າຫາຄວາມຮູ້ຕາມຄວາມສົນໃຈເພື່ອປັບປຸງຕົນເອງ ແລະ ມີການນິເທດສຶກສາໂດຍມະຫາວິທະຍາໄລໄດ້ມີການປະຊຸມອາຈານທັງໝົດກ່ອນການເປີດການຮຽນ-ການສອນ, ມີຜູ້ນິເທດ ແລະ ຜູ້ຮັບການນິເທດຮ່ວມປະຊຸມປຶກສາຫາລືກັນແກ້ບັນຫາດ້ານການຈັດການຮຽນ-ການສອນຮ່ວມກັນ ແລະ ມີການນໍາຜົນການນິເທດການສອນມາປັບປຸງການຮຽນ-ການສອນ. ນອກຈາກນີ້ຍັງມີບາງດ້ານທີ່ຢູ່ໃນລະດັບໜ້ອຍກວ່າໝູ່ເປັນຕົ້ນແມ່ນດ້ານຫໍສະໝຸດ ໃນການປັບປຸງຫ້ອງສະໝຸດໃຫ້ມີປື້ມ,ເອກະສານທີ່ຫຼາກຫຼາຍແລະທັນສະໄໝກວ່າເກົ່າ, ການສ້າງສະພາບແວດລ້ອມທີ່ດີໃຫ້ແກ່ມະຫາວິທະຍາໄລເພື່ອສົ່ງເສີມນັກສຶກສາເຂົ້າມາຮຽນໂດຍສະເພາະແມ່ນ ສະພາບແວດລ້ອມໃນຫ້ອງຮຽນ,ຫໍອາຫານແລະສະຖານທີ່ນັ່ງພັກຜ່ອນທີ່ສະດວກສະອາດແລະບັນຍາກາດດີ, ສິ່ງ

ເຫຼົ່ານີ້ຈະຊ່ວຍສ້າງແຮງຈູງໃຈ ແລະ ສ້າງຈິດສຳນຶກໃນການຮັກການອ່ານ-ການຮຽນຂອງນັກສຶກສາໄດ້ຫຼາຍຂຶ້ນ.

ຈາກຜົນການອະພິປາຍຂ້າງເທິງນີ້ເຫັນວ່າຜົນການຄົ້ນຄວ້າໄດ້ສອດຄ່ອງກັບຫຼາຍຜົນການຄົ້ນຄວ້າໃນດ້ານການບໍລິຫານງານຫຼັກສູດ, ການໃຊ້ເທັກໂນໂລຍີເພື່ອການຮຽນຮູ້ ແລະ ການພັດທະນາຂະບວນການຮຽນການສອນທີ່ມີຄຸນະພາບ, ການຈັດການຮຽນການສອນທີ່ມີໂຄງສ້າງທີ່ຊັດເຈນ ແລະ ໃຊ້ຫຼັກສູດທີ່ເປັນມາດຕະຖານຈະສົ່ງຜົນໃຫ້ເກີດຄຸນະພາບການຮຽນຮູ້ທີ່ດີ. ແນວໃດກໍ່ຕາມການພັດທະນາຊັບພະຍາກອນດ້ານອື່ນ ໆ ທີ່ເປັນການສະໜັບສະໜູນການສຶກສາ ບໍ່ວ່າຈະເປັນຫ້ອງສະໝຸດ ແລະ ການສະໜັບສະໜູນດ້ານອື່ນ ໆ ຍັງຄົງເປັນປັດໃຈສຳຄັນທີ່ຕ້ອງດຳເນີນການເພື່ອເພີ່ມສັກກະຍະພາບຂອງມະຫາວິທະຍາໄລໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຍນ ແລະ ແນວໂນ້ມທາງການສຶກສາໃນອະນາຄົດ.

## 6. *ສະຫຼຸບຜົນ*

ຜົນການຄົ້ນຄວ້າຄັ້ງນີ້ສາມາດສະຫຼຸບໄດ້ດັ່ງນີ້:

1). ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ ຢູ່ໃນລະດັບດີ ເຊິ່ງລຽງລຳດັບໃນການປະຕິບັດທີ່ດີຈາກຫຼາຍໄປຫາໜ້ອຍ ແມ່ນດ້ານ ດ້ານການດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້, ຮອງລົງມາແມ່ນ ດ້ານການຈັດການຮຽນ ການສອນ, ດ້ານສື່ການຮຽນ-ການສອນ, ດ້ານການວັດ ແລະ ປະເມີນຜົນ, ດ້ານການນິເທດສຶກສາ ແລະ ດ້ານຫໍສະໝຸດ ຕາມລຳດັບ.

2) ການປຽບທຽບສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນຢູ່ມະຫາວິທະຍາໄລສຸພານຸວົງ ໂດຍຈຳແນກຕາມເພດ ແລະ ຕຳແໜ່ງງານແມ່ນບໍ່ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສຳຄັນ 0.05

ຈາກຂໍ້ມູນຮູບປະທຳຂ້າງເທິງນີ້ເປັນການຢັ້ງຢືນໃຫ້ເຫັນເຖິງລະດັບການປະຕິບັດການດ້ານວິຊາການຢູ່ມະຫາວິທະຍາໄລສຸພານຸວົງມີຄຸນນະພາບດີ ເຊິ່ງຈະສົ່ງຜົນ ສູ່ຄຸນນະພາບຜູ້ຮຽນໄດ້ດີເຊັ່ນກັນໃນອະນາຄົດ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການຄົ້ນຄວ້າຄັ້ງນີ້ມີຂໍ້ຈຳກັດບາງດ້ານ ເຊິ່ງເປັນພຽງການເກັບກຳ ແລະ ຮວບຮວມຂໍ້ມູນແບບສຳຫຼວດເທົ່ານັ້ນ, ຂໍ້ມູນທີ່ນຳມາວິເຄາະແມ່ນໄດ້ມາຈາກຄວາມຄິດເຫັນຈາກຜູ້ບໍລິຫານ ແລະ ອາຈານສອນເທົ່ານັ້ນ

## 8. ຂໍ້ສະເໜີແນະ

ໃນນາມຜູ້ຄົ້ນຄວ້າຂໍສະເໜີແນະບາງດ້ານ ດັ່ງຕໍ່ໄປນີ້:

1. ຄວນປັບປຸງຫ້ອງສະໝຸດໃຫ້ມີປຶ້ມ, ເອກະສານທີ່ຫຼາກຫຼາຍ ແລະ ທັນສະໄໝກວ່າເກົ່າ ພ້ອມທັງຈັດລະບົບການຈັດການຮຽນ-ການສອນແບບ Flat learning (ນັບເປັນຊົ່ວໂມງຮຽນ).

2. ຄວນສົ່ງເສີມການຮຽນຮູ້ຂອງຜູ້ຮຽນ, ຜູ້ສອນໄດ້ເຂົ້າຮ່ວມທັດສະນະສຶກສາທີ່ມີປະສົບການສະເພາະດ້ານທັງພາຍໃນແລະຕ່າງປະເທດຢ່າງເປັນປົກກະຕິ

3. ເພີ່ມຄຸນນະພາບຂອງວິທີການສອນ, ອາຈານສອນ, ຮູບແບບການສອນ, ສິ່ງແວດລ້ອມ ແລະ ສິ່ງອານວຍຄວາມສະດວກໃຫ້ແກ່ການຮຽນການສອນໃຫ້ມີການຄົ້ນຄວ້າວິໄຈ ແລະ ສາມາດນຳຜົນໄປໃຊ້ໄດ້ຈິງ.

4. ຜູ້ທີ່ສົນໃຈການຄົ້ນຄວ້າໃນລັກສະນະນີ້ໃນຄັ້ງຕໍ່ຄວນເກັບກຳ ແລະ ຮວບຮວມຂໍ້ມູນທາງດ້ານ ຄຸນນະພາບເພີ່ມຕື່ມ ເຊັ່ນ: ການສຳພາດ, ການສັງເກດ ແລະ ອື່ນໆ ເປັນຕົ້ນ.

## 9. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025).* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກົມຈັດຕັ້ງ ແລະ ພະນັກງານ. (2020). *ວິໄສທັດ ຮອດປີ 2030, ແຜນຍຸດທະສາດການພັດທະນາ ຄູ ແລະ ບຸກຄະລາກອນ.* ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ.

ສົມາລາ ລີວົງຢາ ແລະ ນັນທະລັດ ຈະເລີນກຸນ. (2015). ແນວທາງການພັດທະນາຄູຂອງໂຮງຮຽນມັດທະຍົມສຶກສາໃນນະຄອນຫຼວງວຽງຈັນ ສປປ.ລາວ. *An Online Journal of Education, 10*(3), 147–158. retrieved from https://so01.tci-thaijo.org/index.php/OJED/article/view/35547

ທອງທ່ຽນ ວັດທະນາວົງ, ວິເດດ ພັນນະລັດ , ສົມເພັດ ສານ, ໄພວັນ ວັດທະນາວົງ ແລະ ໄຊພອນ ຄົດໄຊໂຍ. (2020). ການສຶກສາສະພາບການ ຈັດຕັ້ງປະຕິບັດວຽກງານການສຶກສາເພື່ອການພັດທະນາແບບຍືນຍົງໃນສະຖາບັນສ້າງຄູຂອງ ສປປ.ລາວ ໂດຍຜ່ານການຝຶກອົບຮົມທາງວິຊາການ, *ວາລະສານວິທະຍາສາດມະຫາວິທະຍາໄລ ສຸພານຸວົງ, 6(1),* 120-131.

ນິລະມົນ ຊາສະຫງວນ, ມິນຕີ ອະນັນຕະລັກ ແລະ ສຸເທບ ທອງປະດິດ. (2015). ການສົ່ງເສີມຄວາມຮູ້ດ້ານວິຊາການແກ່ຊຸມຊົນຂອງສະຖານສຶກສາໃນສັງກັດເທດສະບານນະຄອນພະນົມ ແຂວງນະຄອນພະນົມ. *Nakhon Phanom University Journal, 5*(1), 115-125.

ບຸນຊຶມ ສີສະອາດ. (2015). *ການວິໄຈຂັ້ນພື້ນຖານ (ພິມຄັ້ງທີ່ 8).* ກຸງເທບມະຫານະຄອນ: ສຸວິຣິຍາສາສິນ.

ບຸນຕາ ອິນໄຂຄໍາ. (2023). *ແນວທາງພັດທະນາການບໍລິຫານວິຊາການໃນໂຮງຮຽນມັດທະຍົມສຶກສາສົມບູນ ເມືອງໂພນໂຮງ ແຂວງວຽງຈັນ.* [ວິທະຍານິພົນປະລິນຍາໂທ] ສາຂາບໍລິຫານການສຶກສາ ມະຫາວິທະຍາໄລແຫ່ງຊາດລາວ. ຈາກ: https://anyflip.com/ixqwb/jmxi/basic/51-100

ພິທັກ ເອັນດູ. (2020). *ການພັດທະນາຮູບແບບການບໍລິຫານງານວິຊາການສູ່ຄຸນນະພາບຜູ້ຮຽນໂຮງຮຽນເທບສິຣິນຣົ່ມເກົ້າ.* [ລາຍງານການວິໄຈສະບັບສົມບູນ]. ກຸງເທບ: ສານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາກຸງເທບມະຫານະຄອນເຂດ 2. ສານັກງານກໍາມະການການສຶກສາຂັ້ນພື້ນຖານ, ກະຊວງສຶກສາທິການ.

ພັດສະລິນ ກ່ອມສຸລິວົງ ແລະ ຈິລະສັກ ສຸລັງຄະພິພັດ (2022) ໄດ້ສຶກສາເລື່ອງການບໍລິຫານວິຊາການຂອງໂຮງຮຽນຂະຫຍາຍ ໂອກາດໃນເມືອງລໍາລຸກກາ ສັງກັດເຂດພື້ນທີ່ການສຶກສາປະທຸມທານີ ເຂດ 2. *Journal of Administrative and Management Innovation, 10*(3), 90-96. ຈາກ: https://so02.tci-thaijo.org/index.php/RCIM/article/view/248616/174577

ພັດສະລິນ ຊູຊ່ວຍ ແລະ ອໍານວຍ ທອງໂປ່ງ. (2023). ຄວາມເພິ່ງພໍໃຈຂອງຄູທີ່ມີຕໍ່ການບໍລິຫານວຽກວິຊາການຂອງຜູ້ບໍລິຫານ ສະຖາບັນການສຶກສາກຸ່ມໂຮງຮຽນໃນສະຫະວິທະຍາເຂດເສລີໄທ ສັງກັດສໍານັກງານເຂດພື້ນທີ່ການສຶກສາກຸງເທບມະຫານະຄອນ ເຂດ 2. *Journal of MCU Ubon Review,8*(3), 535-544.

ພອນ ສິດສະເກດ. (2023). ແນວທາງພັດທະນາການບໍລິຫານວຽກງານວິຊາການ ຂອງໂຮງຮຽນສິລະປະແຫ່ງຊາດ [ວິທະຍານິພົນປະລິນຍາໂທ] ສາຂາບໍລິຫານການສຶກສາ ມະຫາວິທະຍາໄລແຫ່ງຊາດລາວ. ຈາກ: https://anyflip.com/ixqwb/snsp/basic

ມະຫາວິທະຍາໄລສຸພານຸວົງ. (2016). *ວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ 5 (2016-2020).* ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ຫ້ອງການວິຊາການ. (2024). *ບົດສະຫຼຸບປະຈໍາປີສົກສຶກສາ 2023-2024.* ຫຼວງພະບາງ: ຫ້ອງການວິຊາການ ມະຫາວິທະຍາໄລສຸພານຸວົງ.

ອະພິຊາດ ຄໍາຫານ, ຈະເລີນວິດ ສົມພົງທໍາ ແລະ ນິບພົງ ບຸນຈິດຕາດູນ. (2021). ການສຶກສາສະພາບການ ບໍລິຫານແລະແນວທາງການພັດທະນາງານວິຊາການຂອງໂຮງຮຽນຂະໜາດນ້ອຍ ສັງກັດເຂດພື້ນທີ່ການສຶກສາປະຖົມສຶກສາອຸບົນລາດຊະທານີ ເຂດ 2. *Journal of Educational Innovation and Research, 5* (3), 648-659.

Best, J.W., & Kahn J.V. (1993). *Research in Education (7th ed.).* Boston: Allyn and Bacon.

Boonrak, P. ., & Siththada, T. (2024). Academic Management Strategies of School Administrators of Watchongnonsee School under the Bangkok Metropolitan Administration. *Academic MCU Buriram Journal, 9*(1), 278–290. retrieved from https://so06.tci-thaijo.org/index.php/ambj/article/view/271675

Creswell, J.W., & Plano Clark, V.L. (2011). *Mixed Methods Designs*. London: Sage Publications Ltd. Harcourt, Brace & World.

Partnership for 21st Century skills. (2020). *21st Century skills*. Ohio, United States of America: Ohio department of education.

Phanakij, P. & Nillapun, M. (2016). Development of an Instructional Model to Enhance Creative Problem Solving Ability and Scientific Innovation for Primary School Students. *Silpakorn Education Journal, 8*(2), 192-204. From:https://so05.tcithaijo.org/index.php/suedureasearchjournal/article/download/48755/62150/185815

Phucharoen, U. (2021). Important of Education is Essential to our Country. *Mahachulagajasara Journal, 12*(1): 25-33. Available From: https://so06.tci-thaijo.org/index.php/gajasara/article/download/252763/170876/

Suwannoi, P. (2012). *Instructional Development Manual of Khon Kaen University*. Faculty of Education: Academic Affairs, Khon Kaen University.

Tanthawanich, P. and Chindasri, P. (2018). The Real Meaning of IOC. *Journal of EducationalMeasurement Mahasarakham University, 24*(2), 3-12. From:https://so02.tci-thaijo.org/index.php/jemmsu/article/view/174521/124950

To-Im, J & Waichalad. (2020). The study of learning achievement of student-centered learning approach: Principle of Environmental. *Silpakorn University e-Journal (Social Sciences, Humanities, and Arts), 8*(2): 115-131. From: https://so05.tci-thaijo.org/index.php/sujthai/article/view/131210/164332

Vathanavong T, Tungkasamith A and Thinwiangthong S. (2024). Enhancing professional development with Lesson study training for Lecturers at Higher education institution in Lao PDR. *FWU Journal of Social Science, 18*(1): 104-119. From: DOI: http://doi.org/10.51709/19951272/Spring2024/8

Wongwanit, S. (2012). *Need-Based Research Assessment* (2nd Edition). Bangkok: Chulalongkorn University Press.

Wongyai, V. (2020). *Development of higher education curriculum (2nd Edition*). Graduate School, Srinakharinwirot University. Bangkok: R and Print Co., Ltd.